ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ຄົມມະນາຄົມ ຂົນສົ່ງ
ໄປສະນີ ແລະ ກໍ່ສ້າງ

ເລກທີ 4681 /ຄຂປກ

ນະຄອນຫຼວງວຽງຈັນ,ວັນທີ 21 APR 2005

## ແຈ້ງການ

ເຖິງ : ບັນດາ ພະແນກ ຄຂປກ ປະຈຳແຂວງ, ນະຄອນຫຼວງ ແລະ ເຂດພິເສດ .

ເລື່ອງ : ຫ້າມເຮືອໄວໂດຍສານທີ່ມີເຄື່ອງຈັກບໍ່ຕິດທໍ່ເກັບສຽງແລ່ນຕາມລຳແມ່ນ້ຳ ແລະ ຫ້າມໃຊ້ແກລົມມີສຽງດັງເກີນມາດຕະຖານແລ່ນຕາມທ້ອງຖະໜົນ.

- ອີງຕາມກົດໝາຍວ່າດ້ວຍການຈະລາຈອນທາງບົກ " ກ່ຽວກັບຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກ ບໍ່ໃຫ້ມີແກທີ່ດັງເກີນມາດຕະຖານ "
- ອີງຕາມແຈ້ງການສະບັບເລກທີ 1663/ຄຂປກ,ລົງວັນທີ 01/07/1997 ກ່ຽວກັບລະບຽບການນຳໃຊ້ເຮືອໄວໂດຍສານ

ໃນໄລຍະຜ່ານມາການຈັດຕັ້ງປະຕິບັດກົດໝາຍກໍ່ຄືແຈ້ງການທີ່ລະບຸໄວ້ເທິງນີ້ຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ ແລະ ໄດ້ສັງເກດເຫັນວ່າໃນແຕ່ລະແຂວງຍັງມີການນຳໃຊ້ເຮືອໄວທີ່ບໍ່ມີທໍ່ເກັບສຽງ ແລະ ລົດທີ່ໃຊ້ແກລົມດັງເກີນຂອບເຂດ,ຊຶ່ງເປັນການລົບກວນປະຊາຊົນຜູ້ທີ່ອາໄສຢູ່ຕາມລຳແມ່ນ້ຳກໍ່ຄືຢູ່ລຽບຕາມແຄມທາງ,ທັງຍັງສ້າງຄວາມບໍ່ສະຫງົບ ແລະ ກະທົບຕໍ່ສະພາບແວດລ້ອມຫຼາຍສົມຄວນ ດັ່ງນັ້ນ:

### ກະຊວງ ຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງຈຶ່ງອອກແຈ້ງການດັ່ງນີ້ :

1. ໃຫ້ພະແນກ ຄຂປກ ປະຈຳບັນດາແຂວງ,ນະຄອນຫຼວງ ແລະ ເຂດພິເສດ ກວດກາການປະຕິບັດກົດໝາຍວ່າດ້ວຍການຈະລາຈອນທາງບົກ ກໍ່ຄືແຈ້ງການຂອງ ກະຊວງ ຄຂປກ ທີ່ໄດ້ວາງອອກນັ້ນຢ່າງເຂັ້ມງວດ.ຫ້າມບໍ່ໃຫ້ລົດທີ່ນຳໃຊ້ແກລົມແລ່ນຕາມຖະໜົນຢ່າງເດັດຂາດ, ລົດທີ່ມີແກລົມຕ້ອງປົດອອກ .
2. ສຳລັບເຮືອຈັກທີ່ແລ່ນຕາມລຳແມ່ນ້ຳຕ້ອງມີທໍ່ເກັບສຽງ, ໂດຍສະເພາະເຮືອໄວແມ່ນໃຫ້ປະຕິບັດ ຕາມແຈ້ງການສະບັບເລກທີ 1663/ຄຂປກ, ລົງວັນທີ 01/07/1997 ຢ່າງເຂັ້ມງວດ.
3. ມອບໃຫ້ພະແນກ ຄຂປກ ສົມທົບກັບເຈົ້າໜ້າທີ່ປະຕິບັດມາດຕະການຕໍ່ຜູ້ລະເມີດຕາມລະບຽບການຢ່າງເດັດຂາດ.
4. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງໃຫ້ການຮ່ວມມືປະຕິບັດແຈ້ງການສະບັບນີ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ .

ລັດຖະມົນຕີວ່າການ

ບົວທອງ ວົງລໍຄຳ